World Vision®

ປຶ້ມຄູ່ມື

ແນະນຳກ່ຽວກັບການເຄື່ອນຍ້າຍ ແຮງງານທີ່ປອດໄພ

ເລື່ອງລາວຂອງການເດີນທາງ

The Vanguard Series: Paving innovative ways to combat trafficking and unsafe migration

Smart Navigator Booklet

© World Vision International, 2014
ISBN 978-0-918261-41-0

World Vision is a Christian humanitarian organisation dedicated to working with children, families and communities to overcome poverty and injustice. Motivated by our Christian faith, World Vision is dedicated to working with the world's most vulnerable people. World Vision serves all people regardless of religion, race ethnicity or gender.

Design by Inís Communication – www.iniscommunication.com

ສາລະບານ

ການຄ້າມະນຸດແມ່ນຫຍັງ? ການເຄື່ອນຍ້າຍແຮງງານແມ່ນຫຍັງ? . . 2

ກົດໝາຍ ແລະ ສົນທິສັນຍາທີ່ກ່ຽວຂ້ອງກັບການຄ້າມະນຸດ 5

ລາຍການເຄື່ອນຍ້າຍແຮງງານທີ່ປອດໄພ 10

ຮູບແບບໃນການຕັດສິນໃຈ 11

ລາຍການເດີນທາງທີ່ປອດໄພ 16

ລາຍການເອກະສານທີ່ຈຳເປັນ. 18

ລາຍການກ່ຽວກັບຄວາມປອດໄພເມື່ອເຈົ້າໄປເຖິງປະເທດປາຍທາງ 21

ວິທີການໂທລະສັບກັບບ້ານ 23

ເບີໂທຕິດຕໍ່ສຸກເສີນຕ່າງໆ 25

ເຈົ້າຈະເຮັດແນວໃດໃນເມື່ອເຈົ້າຖືກຄ້າມະນຸດ? 28

ການຄ້າມະນຸດແມ່ນຫຍັງ ?
ການເຄື່ອນຍ້າຍແຮງງານແມ່ນຫຍັງ ?

ສາກົນເພີ່ນໄດ້ນິຍາມກ່ຽວກັບການຄ້າມະນຸດ, ອີງໃສ່ມາດຕາທີ 3 ວັກທີ (ກ) ຂອງສົນທິສັນຍາປາຣາໂມ້ໄດ້ນິຍາມອອກມາວ່າ:

ການຄ້າມະນຸດແມ່ນການຫຼອກລວງ ຫຼື ບັງຄັບຄົນໂດຍການຂູດຮີດແຮງງານ, ເຊິ່ງວ່າຜູ້ທີ່ຕົກເປັນເຫຍື່ອຈາກການຄ້າມະນຸດ ມີຊີວິດທີ່ລຳບາກ. ການຄ້າມະນຸດແມ່ນກ່ຽວພັນເຖິງການຫຼອກລວງເອົາຜູ້ຖືກເຄາະຮ້າຍ ຈາກບ່ອນທີ່ເຂົາດຳລົງຊີວິດຢູ່ໄປຍັງອີກສະຖານທີ່ແຫ່ງອື່ນ, ໂດຍການບັງຄັບ ຫຼື ຫຼອກລວງ ເພື່ອຂູດຮີດແຮງງານ. ເຖິງຢ່າງໃດກໍ່ຕາມ, ເຈົ້າບໍ່ໄດ້ຍ້າຍຖິ່ນກໍ່ມີສິດຖືກຫຼອກເໝືອນກັນ.

ກົດໝາຍ ແລະ ສົນທິສັນຍາຕ່າງໆທີ່ພົວພັນເຖິງການຄ້າມະນຸດ

ສົນທິສັນຍາສາກົນ

ອົງການສະຫະປະຊາຊາດ ສປຊ, ສົນທິສັນຍາວ່າດ້ວຍສິດທິເດັກ ສສດ UNCRC.

ໃນປີ 1989 ບັນດາຜູ້ນຳຂອງປະເທດຕ່າງໆໃນທົ່ວໂລກໄດ້ຮ່ວມມືກັນ ແລະ ພ້ອມກັນກັບອົງການ ສປຊ ເພື່ອຂຽນສົນທິສັນຍາວ່າດ້ວຍສິດທິເດັກ ສັນຍາອື່ນໆໃນນັ້ນລວມມີ ສປ ຈີນ, ໄທ, ສສ ຫວຽດນາມ, ພະມ້າ, ກຳປູເຈຍ ແລະ ສປປ ລາວ ເຮົາກໍ່ໄດ້ລົງນາມເຊັ່ນດຽວກັນ. ເພື່ອເປັນການຍັ້ງຍືນການນຳໃຊ້ ສົນທິສັນຍາດັ່ງກ່າວ ລັດຖະບານຂອງປະເທດທີ່ເປັນສະມາຊິກ ໄດ້ສ້າງພັນທະຮ່ວມກັນເພື່ອຮັບປະກັນໃຫ້ເດັກໄດ້ຮັບການປົກ ປ້ອງຕາມສິດທິຂອງເຂົາເຈົ້າທີ່ມີ.
ສາມາດເບິ່ງຂໍ້ມູນໄດ້ທີ່ເວັບໄຊ www.uicef.org/crc

ສົນທິສັນຍາປາລາໂມ້

ອະນຸສັນຍາເພີ່ມເຕີມຂອງສົນທິສັນຍາສາກົນປາລາໂມ ວ່າດ້ວຍການປ້ອງກັນ, ປາບປາມ ແລະ ລົງ�โທດຜູ້ກະທຳຜິດການຄ້າມະນຸດໄດ້ໃຫ້ຄຳນິຍາມກ່ຽວກັບການຄ້າມະນຸດວ່າ:

"ການຈັດຫາ, ການຂົນສົ່ງ, ການສົ່ງຕໍ່, ການໃຫ້ບ່ອນລີ້ຊ່ອນ ຫຼື ການຮັບເອົາຄົນ ດ້ວຍຮູບການຂົ່ມຂູ່ ຫຼື ບັງຄັບອື່ນໆ, ການຕົວະຍົວະ, ທຸລະກິດລວງ, ການລັກພາຕົວ, ການໃຊ້ອຳນາດ ຫຼື ຕຳແໜ່ງໜ້າທີ່ຂົ່ມຂູ່ຜູ້ທີ່ດ້ອຍກວ່າ ຫຼື ການໃຫ້ ຫຼື ຮັບ ເອົາການຈ່າຍສິນບົນ ຫຼື ຜົນປະ�โຫຍດອື່ນໆເພື່ອໃຫ້ຄົນອື່ນຍອມຢູ່ໃນການຄວບຄຸມ ແລະ ເພື່ອຈຸດປະສົງການຂູດຮີດຕ່າງໆ

ສາມາດເບິ່ງຂໍ້ມູນໄດ້ທີ່ສົນທິສັນຍາປາລາໂມ້

www.palermoprotocol.com

ມີ 155 ທີ່ໄດ້ລົງນາມເຊັນສົນທິສັນຍາດັ່ງກ່າວ ເຊິ່ງລວມທັງ 6 ປະເທດລຸ່ມແມ່ນ້ຳຂອງ ແລະ ໜຶ່ງໃນນັ້ນກໍ່ມີ ສປປ ລາວ ທີ່ເປັນສະມາຊິກດັ່ງລາຍລະອຽດລຸ່ມນີ້:

ປະເທດກຳປູເຈຍ	2007
ປະເທດຈີນ	2010
ປະເທດລາວ	2003
ປະເທດມຽນມາ	2004
ປະເທດໄທ	2001
ປະເທດຫວຽດນາມ	2012

ກົດໝາຍລະດັບຊາດຂອງບັນດາ 6 ປະເທດ ລຸ່ມແມ່ ນ້ຳຂອງທີ່ກ່ຽວຂ້ອງກັບການຄ້າມະນຸດ

ປະເທດກຳປູເຈຍ.

- ໃນທາງກົດໝາຍຂອງປະເທດກຳປູເຈຍ ເດັກນ້ອຍແມ່ນຜູ້ທີ່ມີອາຍຸຕ່ຳກວ່າ 18 ປີ.
- ການຄ້າມະນຸດຖືວ່າເປັນຄະດີອາຍາໃນປະເທດກຳປູເຈຍພາຍໃຕ້ກົດໝາຍວ່າດ້ວຍການປາບປາມການຄ້າມະນຸດ ແລະ ການຂູດຮີດທາງເພດ (ປີ2008) ກົດໝາຍດັ່ງກ່າວແມ່ນກວມເອົາທັງຜູ້ຊາຍ ແລະ ແມ່ຍິງ.
- ການຂົ່ມຂືນທຳຊຳເລົາຖືເປັນຄວາມຜິດທາງອາຍາໃນປະເທດກຳປູເຈຍ.

ສປປ ຈີນ

- ກົດໝາຍອາຍາຂອງ ສປປ ຈີນ ແມ່ນບໍ່ມີຄຳນິຍາມທີ່ຊັດເຈນກ່ຽວກັບເດັກນ້ອຍ ແລະ ບາງກົດໝາຍ ຂອງ ສປປ ຈີນ ກໍ່ກ່າວເຖິງເດັກນ້ອຍແມ່ນຜູ້ທີ່ມີອາຍຸຕ່ຳກວ່າ 18 ປີ, ແຕ່ກໍ່ຍັງບໍ່ຊັດເຈນວ່າຈະເວົ້າເຖິງເດັກ ຫຼື ບໍ່ ໃນກໍລະນີທີ່ກ່ຽວຂ້ອງກັບການຄ້າມະນຸດ.
- ໃນກົດໝາຍອາຍາຂອງ ສປ ຈີນ ໄດ້ມີການບັນຍັດກ່ຽວກັບການຄ້າມະນຸດ, ແຕ່ເຖິງຢ່າງໃດກໍ່ຕາມມັນກໍ່ພຽງກ່າວເຖິງແຕ່ແມ່ຍິງ ແລະ ເດັກນ້ອຍເທົ່ານັ້ນ ເຊິ່ງຍັງບໍ່ທັນກວມຜູ້ຊາຍທີ່ຖືກຄ້າມະນຸດ (ມາດຕາທີ 240, 241, 262)

- ໃນມາດຕາທີ 244 ກ່າວເຖິງການຫ້າມການບັງຄັບຜູ້ອອກແຮງງານໃນການເຮັດວຽກເຊິ່ງເປັນການຈຳກັດເສລີພາບຂອງພວກເຂົາ.
- ມາດຕາທີ 358 ແລະ 359 ແມ່ນຫ້າມການບັງຄັບໃຫ້ເປັນໂສເພນີ.
- ມາດຕາທີ 236 ການຂົ່ມຂືນທຳຊຳເລົາແມ່ນເປັນຄະດີອາຍາ.
- ມາດຕາທີ 416 ກຳນົດພາລະກິດໃນການຊ່ວຍເຫຼືອແມ່ຍິງ ແລະ ເດັກນ້ອຍທີ່ຖືກລັກພາຕົວໄປ.

ສປປ ລາວ

- ກ່ຽວການຄ້າມະນຸດ, ກົດໝາຍອາຍາ ຂອງ ສປປ ລາວໄດ້ກ່າວເຖິງເດັກນ້ອຍທີ່ຕ່ຳກ່ວາ 18 ປີທີ່ເປັນຜູ້ເສຍຫາຍຈາກການຄ້າມະນຸດ.
- ກົດໝາຍລົງโທດຜູ້ທີ່ກະທຳຜິດກ່ຽວກັບຄະດີອາຍາຈາກການຄ້າມະນຸດໃນມາດຕາທີ 134 ທີ່ມີຜົນບັງຄັບໃຊ້ໃນປີ 2005.
- ກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ ປີ2004 ຍັງໄດ້ມີການຫ້າມກ່ຽວກັບການຄ້າຜູ້ຍິງ ແລະ ເດັກນ້ອຍ ໂດຍສະເພາະແມ່ນໄດ້ລະບຸໄວ້ຢູ່ໃນມາດຕາທີ 24.

ປະເທດມຽນມາ

- ແມ່ນມີກົດໝາຍກ່ຽວກັບການສະກັດກັ້ນການຄ້າມະນຸດສະບັບປີ 2005 ແລະ ໄດ້ກ່າວເຖິງເດັກນ້ອຍແມ່ນຜູ້ທີ່ມີອາຍຸຕ່ຳ ກ່ວາ 18 ປີ.

- ໝວດທີ 3ກ ຂອງກົດໝາຍດັ່ງກ່າວແມ່ນກ່າວເຖິງການຄ້າມະນຸດແມ່ນຄະດີອາຍາ.
- ປະເທດພະມ້າກົດໝາຍອາຍາທີ່ລົງโທດຄະດີຂົ່ມຂືນກະທຳຊຳເລົາແມ່ນຢູ່ໃນໝວດທີ 356 ແລະ 375.

ປະເທດໄທ

- ໝວດທີ 4 ກົດໝາຍວ່າດ້ວຍການສະກັດກັ້ນການຄ້າມະນຸດ ໄດ້ນິຍາມມາວ່າເດັກນ້ອຍແມ່ນຜູ້ທີ່ມີອາຍຸຕ່ຳກວ່າ 18 ປີ.
- ໝວດທີ 4 ແລະ 6 ໄດ້ລະບຸໄວ້ວ່າການຄ້າມະນຸດແມ່ນເປັນຄະດີອາຍາ.

ສສ ຫວຽດນາມ

- ກົດໝາຍກ່ຽວກັບການປົກປ້ອງເດັກນ້ອຍ, ການເບິ່ງ ແຍງ ແລະ ການສຶກສາ ປີ2004 ໄດ້ກ່າວໄວ້ວ່າເດັກນ້ອຍແມ່ນຄົນຜູ້ທີ່ມີອາຍຸຕ່ຳກວ່າ 16 ປີ. ແຕ່ກົດໝາຍອາຍາປີ (1999) ແມ່ນບໍ່ມີຄຳນິຍາມກ່ຽວກັບອາຍຸຂອງເດັກ.
- ການຄ້າແມ່ຍິງ ແລະ ເດັກນ້ອຍ (ບໍ່ມີຜູ້ຊາຍ) ແມ່ນເປັນຄະດີອາຍາພາຍໃຕ້ກົດໝາຍອາຍາມາດຕາທີ 119 ແລະ 120.
- ຫວຽດນາມມີກົດໝາຍການຄ້າມະນຸດສະບັບໃໝ່ທີ່ຮັບຮອງໃນປີ 2011 ແລະ ມີຜົນບັງຄັບໃຊ້ໃນເດືອນ ມັງກອນ ປີ 2012. ການຄ້າມະນຸດຖືວ່າເປັນຄະດີອາຍາພາຍໃຕ້ກົດໝາຍສະບັບນີ້ ແລະ ລັດຖະບານກໍ່ໄດ້ນຳໃຊ້ໃນປີຜ່ານມາໃນການຈັດຕັ້ງປະຕິບັດກົດໝາຍໃໝ່.
- ການຂົ່ມຂືນທຳຊຳເລົາກໍ່ຖືວ່າເປັນຄະດີອາຍາພາຍໃຕ້ກົດໝາຍອາຍາໃນມາດຕາທີ 111 ຫາ 115.

ລາຍການກວດກາກ່ຽວກັບການເຄື່ອນຍ້າຍແຮງງານທີ່ປອດໄພ

ຈົ່ງຕອບຄຳຖາມເຫຼົ່ານີ້ເມື່ອເຈົ້າມີແນວຄິດທີ່ຈະເຄື່ອນຍ້າຍແຮງງານໄປຊອກວຽກເຮັດງານທຳຢູ່ນອກປະເທດໂດຍການສົນທະນາຄຳຖາມເຫຼົ່ານີ້ກັບຄອບຄົວຂອງເຈົ້າ.

ຂໍ້ມູນກ່ຽວກັບບ່ອນທີ່ຈະເດີນທາງໄປ

ຂີດກາໝາຍໃສ່	ຮູ້	ບໍ່ຮູ້
ເຈົ້າຮູ້ບໍເຈົ້າຈະໄປໃສ ? ຈົ່ງຂຽນຊື່ຂອງເມືອງໃສ່ຂ້າງລຸ່ມນີ້:		
ເຈົ້າຮູ້ຈັກກັບໃຜແດ່ຢູ່ບ່ອນທີ່ເຈົ້າ ຈະໄປນັ້ນ?		
ເຈົ້າມີເບີໂທຕິດຕໍ່ຂອງຜູ້ທີ່ເຈົ້າຮູ້ຢູ່ບ່ອນທີ່ຈະໄປນັ້ນບໍ?		
ເຈົ້າສາມາດໂທຫາເຂົາເພື່ອໃຫ້ເຂົາມາຮັບເຈົ້າ ເວລາທີ່ໄປຮອດສະຖານທີ່ນັ້ນໄດ້ບໍ?		

ຂໍ້ມູນກ່ຽວກັບການເດີນທາງທີ່ປອດໄພ

ຂີດກາໝາຍໃສ່	ຮູ້	ບໍ່ຮູ້
ເຈົ້າຮູ້ບໍວ່າຈະກັບບ້ານແນວໃດເມື່ອເຊົາເຮັດວຽກຢູ່ທີ່ນັ້ນ?		
ເຈົ້າຮູ້ບໍວ່າຄ່າເດີນທາງກັບມາບ້ານປະມານເທົ່າໃດ, ຈົ່ງຂຽນຈຳນວນເງິນໃສ່ຂ້າງລຸ່ມນີ້		
ຄ່າໃຊ້ຈ່າຍຢູ່ບ່ອນທີ່ເຈົ້າຈະໄປເຮັດວຽກນັ້ນຈະໝົດເທົ່າໃດໃນກໍລະນີທີ່ເຈົ້າໄປຮອດ ແຕ່ຍັງບໍ່ມີວຽກເຮັດ? ຈົ່ງຂຽນຈຳນວນເງິນໃສ່ບ່ອນຫວ່າງນີ້:		
ເຈົ້າມີເງິນພຽງພໍທີ່ຈະຈ່າຍກັບບ້ານ ແລະ ໃຊ້ຈ່າຍໃນເວລາອາໄສຢູ່ທີ່ນັ້ນໄລຍະໜຶ່ງ? (ຈົ່ງຈຳໄວ້ວ່າມັນເປັນສິ່ງທີ່ອັນຕະລາຍທີ່ສຸດຖ້າເຈົ້າຢືມເງິນນຳນາຍໜ້າ ຫຼື ນາຍຈ້າງເພື່ອໃຊ້ຈ່າຍໃນການເດີນທາງກ່ອນ ແລະ ຫັກເອົາຄືນພາຍຫຼັງຈາກນາຍຈ້າງ, ຖ້າຫາກເຈົ້າເປັນໜີ້ເຂົາແລ້ວກໍ່ອາດຈະຖືກ ເອົາປຽບ ແລະ ກົດຂີ່ແຮງງານຈາກນາຍໜາ ຫຼື ນາຍ ຈ້າງໄດ້ງ່າຍ).		
ເຈົ້າຈະເດີນທາງໄປກັບໝູ່ເພື່ອນຂອງເຈົ້າບໍ ?		

ຂໍ້ມູນກ່ຽວກັບວຽກງານ

ຂີດກາໝາຍໃສ່	ຮູ້	ບໍ່ຮູ້
ເຈົ້າຮູ້ຈັກກັບໃຜແດ່ທີ່ໄປເຮັດວຽກກັບນາຍໜ້າ ຈັດຫາງານຄົນນີ້ມາກ່ອນບໍ?		
ຜູ້ທີ່ໄປເຮັດວຽກຢູ່ທີ່ນັ້ນບາງຄັ້ງພວກເຂົາ ໄດ້ມາຢ້ຽມຢາມບ້ານຢູ່ບໍ?		
ວຽກທີ່ເຂົາເຮັດແມ່ນຄ້າຍຄືກັນກັບວຽກທີ່ເຈົ້າ ໄດ້ຍິນມາບໍ?ເງິນເດືອນກໍ່ໄດ້ເທົ່າກັນ ກັບຜູ້ ເຄືອນຍ້າຍແຮງງານຄົນອື່ນໆທີ່ເຈົ້າໄດ້ ຮູ້ຈັກ ຜ່ານມາຢູ່ບໍ່? (ຖ້າຟັງເບິ່ງແລ້ວຫາກເກີນຄວາມຈິງກໍ່ອາດກຳ ລັງຈະຖືກຫຼອກລວງ)		
ຄົນຜູ້ທີ່ຫາວຽກໃຫ້ເຈົ້າເຮັດໄດ້ບອກຊື່ ແລະ ສະຖານທີ່ບ່ອນທີ່ເຈົ້າຈະໄປເຮັດ ວຽກນັ້ນບໍ? ຈົ່ງຂຽນຊື່ບໍລິສັດນັ້ນໃສ່ຂ້າງລຸ່ມນີ້:		
ພວກເຂົາສາມາດບອກທີ່ຢູ່ ແລະ ເບີໂທລະສັບ ຂອງບໍລິສັດນັ້ນໃຫ້ກັບເຈົ້າບໍ? ຈົ່ງຂຽນຊື່ບໍລິສັດ ດັ່ງກ່າວໃສ່ຂ້າງລຸ່ມນີ້.....		

ຖ້າເຈົ້າສາມາດເຂົ້າໃຊ້ອິນເຕີເນັດໄດ້ ເຈົ້າກໍ່ ສາມາດເຂົ້າໄປເບິ່ງຊື່ບໍລິສັດນັ້ນທາງອິນເຕີ ເນັດກ່ອນ?:		
ເຈົ້າມີສັນຍາແຮງງານບໍ? ຖ້າເຈົ້າບໍ່ມີສັນຍາ ແຮງ ງານ, ເຈົ້າກໍ່ສາມາດໂອ້ລົມກ່ຽວກັບເງື່ອນ ໄຂສຳລັບວຽກງານຂອງເຈົ້າ?		
ເຈົ້າສາມາດອ່ານ ແລະ ເຂົ້າໃຈເນື້ອໃນຂອງ ສັນຍາຕ່າງໆຢ່າງຊັດເຈນບໍ?		
ເຈົ້າເຫັນດີກັບເງື່ອນໄຂທີ່ສັນຍາໄດ້ລະບຸໄວ້ ທຸກຂໍ້ແລ້ວບໍ? ເຈົ້າ?.....		

ເອກະສານຕ່າງໆ

ຂີດກາໝາຍໃສ່	ຮູ້	ບໍ່ຮູ້
ຖ້າເຈົ້າມີຈຸດປະສົງຢາກເດີນທາງໄປປະເທດ ໃດປະເທດໜຶ່ງ ເຈົ້າມີໜັງສືເດີນທາງ ແລະ ວີຊາໃຫ້ເຂົ້າປະເທດນັ້ນແລ້ວບໍ?		

ຄົນຜູ້ທີ່ເຮົາຈະຕິດຕໍ່ຫາ

ຂີດກາໝາຍໃສ່	ຮູ້	ບໍ່ຮູ້
ເຈົ້າມີໂທລະສັບ ຫຼື ເບີໂທຕິດຕໍ່ຂອງພໍ່ແມ່ແລ້ວບໍເພື່ອທີ່ຈະໂທຫາໃນລະຫວ່າງການເດີນທາງ ເພື່ອລາຍງານສະພາບການເດີນທາງ?		
ເຈົ້າຮູ້ອົງການໃດໜຶ່ງ ຫຼື ບຸກຄົນ ເພື່ອເຈົ້າຈະສາມາດຕິດຕໍ່ຫາຢູ່ໃນເມືອງ/ປະເທດຕ່າງໆ ໃນກໍລະນີທີ່ພົບບັນຫາເພື່ອຂໍຄວາມຊ່ວຍເຫຼືອ ໃຫ້ທັນເວລາ ?		

ຈົ່ງຕື່ມແນວຄວາມຄິດຂອງບັນດາຜູ້ເຂົ້າຮ່ວມໃສ່ຫ້ອງນີ້

_____

_____

_____

_____

_____

_____

ຖ້າມີຄຳຕອບວ່າ " ຮູ້ " ຫຼາຍເທົ່າໃດກໍ່ສະແດງວ່າແຜນການເດີນທາງຈະມີຄວາມປອດໄພຫຼາຍເທົ່ານັ້ນ

ແຜນວາດສະແດງເພື່ອໃຊ້ໃນການຕັດສິນໃຈ

ລາຍການເດີນທາງທີ່ປອດໄພ

ລາຍການ

ພະຍາຍາມຊອກຫາທາງເລືອກຂອງການເດີນທາງ ທີ່ຖືກຕ້ອງຕາມກົດໝາຍ ເພາະມັນຈະປອດໄພຫຼາຍ ທີ່ສຸດ.

ຈົ່ງຕື່ມໃສ່ລາຍການກວດກາກ່ຽວກັບການເດີນທາງ ທີ່ປອດໄພ ແລະ ເອກະສານທີ່ສຳຄັນກ່ອນທີ່ຈະເດີນ ທາງອອກຈາກບ້ານ

ຈົ່ງເລົ່າໃຫ້ຈື່ກ່ຽວກັບເບີ�โทติดຕໍ່ສຸກເສີນກ່ອນທີ່ຈະ ເດີນທາງ (ເບີໂທໃນເອກະສານຂໍ້ມູນ 24ຄ: ເບີໂທຕິດ ຕໍ່ສຸກເສີນປະເທດຕົນເອງ ແລະ ເບີໂທຕິດຕໍ່ສຸກເສີນ ປະເທດ ທີ່ເຈົ້າຈະໄປ).

ຈົ່ງປະສຳເນົາເອກະສານສະບັບໜຶ່ງໄວ້ນຳຄອບຄົວ ຫຼື ຜູ້ໃດຜູ້ໜຶ່ງທີ່ເຈົ້າເຊື່ອໃຈເພື່ອ (ເພື່ອຊ່ວຍເຫຼືອໃນ ເວລາມີບັນຫາ ຫຼື ເອກະສານທີ່ຖືໄປນຳຫາກເສຍ ຫາຍ).

ຖືສຳເນົາສະບັບໜຶ່ງແຍກຕ່າງຫາກຈາກເອກະສານ ຕົ້ນສະບັບ.

ຈົ່ງເດີນທາງພ້ອມກັບໃຫ້ມີເງິນຈຳນວນໜຶ່ງເພື່ອໃຊ້ ຈ່າຍໃນເວລາທີ່ຍັງຊອກຫາວຽກເຮັດ ແລະ ໃຫ້ພຽງ ພໍທີ່ຈະກັບບ້ານຖ້າບໍ່ໄດ້ເຮັດວຽກ.

ຮັກສາປຶ້ມຄູ່ມືກ່ຽວກັບການເດີນທາງທີ່ປອດໄພ, ເອກະ ສານທີ່ສຳຄັນຕ່າງໆ ແລະ ເງິນໄວ້ໃນບ່ອນທີ່ປອດໄພ.

ຄວນເດີນທາງໄປກັບກຸ່ມຜູ້ເຄື່ອນຍ້າຍແຮງງານຄື ກັນກັບເຈົ້າ (ມັນເປັນການຍາກທີ່ຈະຫລອກລວງ ຄົນຢູ່ໃນກຸ່ມ ແລະ ການໄປເປັນກຸ່ມໝາຍຄວາມວ່າ ເຈົ້າມີເພື່ອນທີ່ຈະສາມາດຊ່ວຍກັນໄດ້).

ຈົ່ງລະວັງຄົນແປກໜ້າຢູ່ສະເໝີເພາະພວກເຂົາອາດ ເປັນຜູ້ຄ້າມະນຸດ.

ຖ້າມີໃຜຄົນໜຶ່ງມາບັງຄັບເພື່ອຈະເອົາເອກະສານ ຂອງເຈົ້າໄວ້, ເຈົ້າຕ້ອງຮ້ອງຂໍຄວາມຊ່ວຍເຫຼືອນຳຜູ້ ທີ່ເດີນທາງມານຳກັນ ຫຼື ພະນັກງານອື່ນໆມາຊ່ວຍ.

ບໍ່ຕ້ອງໄປນຳຄົນແປກໜ້າຢູ່ທີ່ສະຖານີລົດໄຟ ຫຼື ສະຖານີລົດເມ.

ພະຍາຍາມຫລີກລ້ຽງບໍ່ໃຫ້ຂຶ້ນລົດສ່ວນຕົວ ຫຼື ລົດຕູ້ ຂອງຄົນອື່ນ.

ລາຍການເອກະສານທີ່ຈຳເປັນຕ່າງໆ

- ນີ້ແມ່ນລາຍການເບີໂທລະສັບ ແລະ ເອກະສານຕ່າງໆທີ່ເຈົ້າຄວນຈະຖືໄວ້ຢູ່ຕະຫຼອດເວລາເມື່ອເວລາເດີນທາງ.
- ຈົ່ງສຳເນົາເອກະສານຂອງເຈົ້າໄວ້ 2 ສະບັບ, ເອົາຊຸດ ໜຶ່ງປະໄວ້ນຳຄອບຄົວ ແລະ ອີກຊຸດໜຶ່ງຖືໄວ້ກັບຕົນເອງ, ຈາກນັ້ນໃຫ້ສຳເນົາເອກະສານສະບັບທີສາມໄວ້ອີກແລ້ວແຍກເຊື່ອງໄວ້ຕ່າງຫາກ ເພື່ອຮັບປະກັນວ່າ ຖ້າເອກະສານສະບັບຕົ້ນຫາກເສຍຫາຍ ຫຼື ຖືກລັກກໍ່ຍັງອີກສະບັບໜຶ່ງທີ່ສຳເນົາໄວ້ເພື່ອແจ້ງຕໍ່ເຈົ້າໜ້າທີ່ຕຳຫຼວດໃນເວລາມີບັນຫາ ຖືກໂກງແຮງງານ ຫຼື ຖືກຄ້າມະນຸດ.

ເບີໂທຕິດຕໍ່ ຫຼື ເອກະສານທີ່ເຈົ້າຄວນຈະມີໄວ້

ຈົ່ງຂຽນເບີໂທລະສັບ ແລະ ທີ່ຢູ່ໃສ່ຂ້າງລຸ່ມນີ້ຖ້າມີ

ເບີໂທລະສັບຂອງຄອບຄົວ/ພໍ່ແມ່

ເບີໂທລະສັບຂອງຄົນຜູ້ທີ່ໄດ້ເຮັດວຽກແລ້ວ

ເບີໂທລະສັບຂອງຄົນຜູ້ທີ່ຢູ່ໃນປະເທດປາຍທາງທີ່ເຈົ້າຮູ້

ເບີໂທລະສັບຂອງໜ່ວຍງານໃຫ້ຄວາມຊ່ວຍເຫຼືອ/ໂຄງການຢູ່ໃນສະຖານທີ່ບ່ອນທີ່ເຈົ້າຈະໄປເຮັດວຽກ - ໃນກໍລະນີທີ່ຕ້ອງການຂໍຄວາມຊ່ວຍເຫຼືອ

ເບີໂທລະສັບຂອງເຈົ້າໜ້າທີ່ຕຳຫຼວດ

ເລກທີໜັງສືຜ່ານແດນ (ກໍລະນີເດີນທາງໄປຕ່າງປະເທດ)

ຈົ່ງສຳເນົາປັດສະປໍ (ເອົາແຕ່ສຳເນົາໃຫ້ຄົນອື່ນເທົ່ານັ້ນ ແລະ ຖືໜັງສືເດີນທາງທີ່ເປັນຂອງແທ້ໄວ້ກັບຕົນເອງຕະຫຼອດເວລາ)

ຂໍວີຊ້າຂອງປະເທດປາຍທາງ (ຖ້າເດີນທາງໄປຕ່າງປະເທດ)

ຈົ່ງສຳເນົາວີຊ້າ

ຊື່ ແລະ ສະຖານທີ່ບ່ອນທີ່ເຈົ້າຈະໄປເຮັດວຽກ

ຊື່ ແລະ ທີ່ຢູ່ຂອງສະຖານທູດປະເທດຂອງຕົນເອງ, ບ່ອນທີ່ເຈົ້າຈະໄປເຮັດວຽກ

ຊື່ ແລະ ທີ່ຢູ່ຂອງອົງການໃຫ້ຄວາມຊ່ວຍເຫຼືອທີ່ປະເທດຈະໄປເຮັດວຽກ

ຈົ່ງສຳເນົາສັນຍາແຮງງານຂອງເຈົ້າ

ໃຫ້ຖືໂທລະສັບໄປນຳ (ເພື່ອເຈົ້າຈະສາມາດຊື້ເບີ�โทຂອງປະເທດປາຍທາງໃຊ້ເວລາໄປຮອດ).

ຈົ່ງຖືເງິນໃຫ້ພຽງພໍສຳລັບການຈ່າຍປີ້ລົດກັບບ້ານເມື່ອເວລາມີບັນຫາ

ຫ້ອງນີ້ແມ່ນຊຽນຄຳເຫັນຂອງຜູ້ເຂົ້າຮ່ວມໃສ່

ຖ້າເຈົ້າມີເອກະສານຫຼາຍເທົ່າໃດຍິ່ງເຮັດໃຫ້ເຈົ້າມີຄວາມປອດໄພຫຼາຍເທົ່ານັ້ນ.

ສິ່ງທີ່ຄວນຈະເຮັດໃນເມື່ອເຈົ້າໄປຮອດຈຸດໝາຍປາຍທາງ

ໃຫ້ໝາຍຖືກ (√) ໃສ່ຖ້າຫາກว่าเจ้าได้เธ็ดสิ่ง ดั่ງກ່າວທີ່ຢູ່ຫ້ອງຊ້າຍມືນັ້ນ

ເມື່ອໄປເຖິງບ່ອນເຮັດວຽກແລ້ວ ແມ່ນຄວນສອບຖາມຊື່ເມືອງ ແລະ ບ້ານໃກ້ຄຽງທີ່ເຈົ້າຢູ່, ພະຍາຍາມອະທິບາຍໃຫ້ຜູ້ອື່ນຮູ້ວ່າເຮົາອາໄສຢູ່ຈຸດໃດ? (ການອະທິບາຍຈະຊ່ວຍໃຫ້ເຮົາຮູ້ວ່າເຮົາອາໄສຢູ່ບ່ອນໃດເພື່ອຈະບອກສະຖານທີ່ໃຫ້ກັບບຸກຄົນ ຫຼື ໜ່ວຍງານທີ່ຈະໃຫ້ການຊ່ວຍເຫຼືອໃນເວລາຕົນເອງມີບັນຫາ ແລະ ຮ້ອງຂໍຄວາມຊ່ວຍເຫຼືອ)

ໂທຫາຄອບຄົວຂອງຕົນທັນທີທີ່ໄປຮອດສະຖານທີ່ເຮັດວຽກ (ວິທີການໂທແມ່ນໄດ້ອະທິບາຍໃນເອກະສານຄູ່ມືນີ້), ຈົ່ງບອກຄອບຄົວ ກ່ຽວກັບທີ່ຢູ່ຂອງຕົນ, ແລະ ຖ້າຫາກເປັນໄປໄດ້ກໍ່ໃຫ້ ເອົາເບີ�โทຂອງໝູ່ບ່ອນທີ່ຕົນເຮັດວຽກເພື່ອໃຫ້ຄອບ ຄົວສາມາດຕິດຕໍ່ຫາຕົນເອງ.

ຈົ່ງໂທຫາພໍ່ແມ່ຂອງຕົນເປັນປະຈຳ, ມັນເປັນສິ່ງທີ່ດີຖ້າຫາກເຈົ້າມີແຜນກັບຄອບຄົວ ເພື່ອໂທຫາກັນອາທິດລະຄັ້ງໃນວັນ ແລະ ເວລາດຽວນີ້ກໍ່ໝາຍຄວາມວ່າຖ້າຫາກເຈົ້າລືມ ຫຼື ບໍ່ໄດ້ໂທຫາຄອບຄົວ, ເຂົາກໍ່ຈະສົງໃສວ່າອາດຈະມີບັນຫາ ຫຼື ມີອັນຕະລາຍ. ຈົ່ງບອກກັບຄອບຄົວຖ້າຫາກເຈົ້າມີບັນຫາຫຍັງທີ່ບ່ອນເຮັດວຽກເພື່ອປຶກສາຫາລືກັບພໍ່ແມ່.

ໃຫ້ໄປເບິ່ງສະຖານທີ່ບ່ອນທີ່ຈະເຮັດວຽກ ແລະ ຕັດສິນໃຈວ່າວຽກນັ້ນເໝາະກັບເຈົ້າ ຫຼື ບໍ່

ຈົ່ງຕິດຕໍ່ກັບໝູ່ຜູ້ທີ່ເດີນທາງມາເຮັດວຽກພ້ອມກັບ ເຈົ້າເປັນປະຈຳ, ຈົ່ງສ້າງເຄືອຂ່າຍກັບໝູ່ຜູ້ທີ່ຢູ່ໃນ ສະຖານະການດຽວກັນກັບເຈົ້າ, ແຕ່ຈົ່ງຈຳໄວ້ສະເໝີว่า ມີຫຼາຍຄົນທີ່ຖືກຫລອກໂດຍຄົນທີ່ພວກເຂົາຮູ້ຈັກກັນດີ

ເດີນສຳຫຼວດເພື່ອນບ້ານຂອງເຈົ້າ ແລະ ສຶກສາວ່າສະຖານີຕຳຫຼວດ ແລະ ສະຖານີລົດເມຢູ່ໃສ

ຈົ່ງຊອກຫາສູນໃຫ້ການຊ່ວຍເຫຼືອຂອງຊຸມຊົນ ຫຼື ອົງການທີ່ບໍລິການຊ່ວຍເຫຼືອແຮງງານເຄື່ອນຍ້າຍເພື່ອສຳຫຼວດສະຖານທີ່ດັ່ງກ່າວ

ຖ້າຫາກว่าເຈົ້າຕັດສິນໃຈຢາກຈະສົ່ງເງິນກັບບ້ານ ຈົ່ງປຶກສາກັບເພື່ອນກ່ຽວກັບວິທີທາງທີ່ປອດໄພໃນການສົ່ງເງິນກັບບ້ານ ຫ້າມສົ່ງເງິນກັບບ້ານໂດຍໃສ່ຊອງຈົດໝາຍເພາະວ່າມັນອາດຖືກຫລັກໄດ້ງ່າຍ

ວິທີໂທລະສັບຫາຄອບຄົວ

- ຖ້າຫາກເຈົ້າມີໂທລະສັບແມ່ນໃຫ້ຖືມັນໄປນຳໃນບ່ອນທີ່ຈະໄປເຮັດວຽກ, ແຕ່ວ່າເບີໂທລະສັບຂອງເຈົ້າແມ່ນບໍ່ສາມາດນຳໃຊ້ໄດ້ໃນຕ່າງປະເທດ ແລະ ເຈົ້າຄວນຊື້ເອົາເບີໂທລະສັບທີ່ປະເທດປາຍທາງໃສ່ເວລາເດີນທາງໄປຮອດປະເທດດັ່ງກ່າວ.

- ຖ້າເຈົ້າບໍ່ມີໂທລະສັບຂອງເຈົ້າເອງ, ມີຫຼາຍປະເທດປາຍທາງ ເຊັ່ນວ່າ: ປະເທດໄທ , ປະເທດມາເລເຊຍ ກໍ່ມີຮ້ານບໍລິການອິນເຕີເນັດບ່ອນທີ່ເຈົ້າຈະຈ່າຍເງິນໃຫ້ເຂົາເພື່ອໂທຫາຄອບຄົວ.

ວິທີໂທຫາປະເທດຂອງເຈົ້າ:

- ໃຫ້ກົດ 001
- ຕາມດ້ວຍລະຫັດປະເທດ.
- ຫຼັງຈາກນັ້ນໃຫ້ກົດເບີໂທລະສັບປະເທດຂອງເຈົ້າ. ຈົ່ງຂ້າມເລກ 0 ໂຕທຳອິດ.

001 + ລະຫັດປະເທດ + (ບໍ່ໃຫ້ຂຽນ 0) + ເບີໂທ

ນີ້ແມ່ນລະຫັດຂອງແຕ່ລະປະເທດ :

- ປະເທດກຳປູເຈຍ: 855
- ປະເທດຈີນ: 86
- ປະເທດລາວ: 856

- ປະເທດຫວຽດນາມ: 84
- ປະເທດໄທ: 66
- ປະເທດພະມ້າ: 95

ຕົວຢ່າງ: ຖ້າໂທພາຍໃນປະເທດກຳປູເຈຍແມ່ນກົດ

ກົດ	**012 820544**

ແຕ່ຖ້າໂທຈາກປະເທດໄທມາປະເທດກຳປູເຈຍແມ່ນ

ກົດ	**001 855 12 820 544**

ເບີໂທລະສັບສຸກເສີນ

ປະເທດກຳປູເຈຍ

ນະຄອນພະນົມເປນ :	**017 276 222**
ແຂວງ ປາຕາບອງ :	**017 256 222**
ແຂວງ ບັນເຕີຍແມນເຈີຍ :	**017 260 222**
ແຂວງ ຊຽງລຽບ :	**017 258 222**
ກຳປົງທົມ :	**017 254 222**
ກຳປົງຈະນັງ :	**017 326 222**

ສປ ຈີນ

ເບີໂທສຸກເສີນໄວໜຸ່ມ	**12355**
ເບີໂທສຸກເສີນແມ່ຍິງ	**12338**
ເບີໂທການປົກປ້ອງສິດທິຜູ້ອອກແຮງງານ	**12333**
ເບີໂທຫ້ອງການປົກຄອງແຂວງ	**12345**
ເບີໂທເຈົ້າໜ້າທີ່ຕຳຫຼວດ	**110**

ຫວຽດນາມ

ເບີໂທທີ່ໃຫ້ການຊ່ວຍເຫຼືອຂອງສອງໜ່ວຍງານຕໍ່ໄປນີ້ເຊິ່ງ ຜູ້ເຄື່ອນຍ້າຍແຮງງານສາມາດໂທໃນກໍລະນີສຸກເສີນເພື່ອຂໍ ຄວາມຊ່ວຍເຫຼືອ.

18001567 ແລະ **(844)**

ສປປ ລາວ

ເບີໂທຕິດຕໍ່ສຸກເສີນທີ່ປະເທດລາວ

ໜ່ວຍງານທີ່ໃຫ້ຄວາມຊ່ວຍເຫຼືອ	ເບີໂທຕິດຕໍ່ໃນໂມງ ລັດຖະການ (856)	ເບີໂທຕິດຕໍ່ໃນໂມງ ລັດຖະການ (856)
ສູນໃຫ້ຄຳປຶກສາແມ່ຍິງ ແລະ ເດັກ ນ້ອຍສູນກາງສະຫະພັນແມ່ຍິງລາວ ທີ່ນະຄອນຫຼວງວຽງຈັນ ສາຍດ່ວນ	**021 771 471** **1362**	
ສູນໃຫ້ການຊ່ວຍເຫຼືອແມ່ຍິງ ແລະ ເດັກນ້ອຍທີ່ໄດ້ຮັບເຄາະຮ້າຍ ຈາກ ການຄ້າມະນຸດ ທີ່ນະຄອນ ຫຼວງວຽງຈັນ	**021 454 783**	**020 2247 2440**
ອົງການເພື່ອນມິດ ທີ່ນະຄອນຫຼວງວຽງຈັນ	**021 261 389**	**020 7787 7555**
ອົງການສະຫະປະຊາຊາດວ່າດ້ວຍ ໂຄງການສະກັດກັ້ນການຄ້າມະນຸດ ທີ່ນະຄອນຫຼວງວຽງຈັນ	**021 267 791-93**	

ພະແນກປົກປ້ອງ ແລະ ຊ່ວຍເຫຼືອ ເດັກ, ກະຊວງ ແຮງງານ ແລະ ສະຫວັດດີການສັງຄົມ	**021 252 685**	
ສູນໃຫ້ຄຳປຶກສາແຮງງານເຄື່ອນ ຍ້າຍ ທີ່ນະຄອນ ຫຼວງວຽງຈັນ		**020 2844 4515**
ສູນໃຫ້ຄຳປຶກສາແຮງງານເຄື່ອນ ຍ້າຍ, ທີ່ແຂວງສະຫວັນນະເຂດ		**020 5483 8969**

ມຽນມາ

ເບີໂທສຸກເສີນຂອງໜ່ວຍງານຕ້ານການຄ້າມະນຸດແມ່ນ :

95-67-412555 **95-67-412666**
95-949-555666 **95-949-555777**
95-949-555888 **95-949-555999**

ໄທ

1300 ເບີໂທຂໍຄວາມຊ່ວຍເຫຼືອກໍລະນີແຮງງານຕ່າງດ້າວທີ່ຖືກ ຂູດຮີດແຮງງານ ຫຼື ຄ້າມະນຸດໃນປະເທດໄທ, ແຕ່ບາງແຂວງເບີໂທ

1191 ສາຍດ່ວນຂອງເຈົ້າໜ້າທີ່ຕຳຫຼວດສະກັດກັ້ນ ແລະ ປາບປາມ ການຄ້າມະນຸດ.

1417 ສາຍດ່ວນໃຫ້ຄຳປຶກສາແກ່ໄວໜຸ່ມ.

ເຈົ້າຈະເຮັດແນວໃດຖ້າຕົກໃນກໍລະນີເປັນ ຜູ້ທີ່ຖືກຄ້າມະນຸດ

ຖ້າວ່າເຈົ້າໄດ້ຖືກເຄື່ອນຍ້າຍຈາກບ່ອນນີ້ໄປຫາບ່ອນອື່ນໂດຍ ການຄວບຄຸມຂອງຜູ້ຄ້າມະນຸດ ແມ່ນໃຫ້ເຈົ້າພະຍາຍາມສັງ ເກດເບິ່ງປ້າຍໂຄສະນາ ຫຼື ເຄື່ອງໝາຍຕ່າງໆ ແລະ ໃຫ້ພະຍາ ຍາມນຶກວາດພາບว่าเจ้ากำลังอยู่บ่อนใด, ให้สังเกตสะถา ນີລົດໄຟຕ່າງໆ, ໝາຍເລກທາງດ່ວນຕ່າງໆ, ຊື່ເມືອງ ຫຼື ອາ ຄານທີ່ສາມາດຈື່ຈຳໄດ້ງ່າຍ. ຈົ່ງຈົດຈຳທຸກລາຍລະອຽດເພາະ ວ່າວິທີນີ້ຈະຊ່ວຍໃຫ້ເຈົ້າສາມາດຊອກຫາວິທີທາງເພື່ອໂທລະ ສັບຫາຜູ້ທີ່ຈະມາຊ່ວຍເຫຼືອຮູ້ว่าเจ้านั้นกำลังอยู่ใส.

ຖ້າເຈົ້າຖືກບັງຄັບໃຫ້ເຮັດວຽກທີ່ຂັດກັບຄວາມບໍ່ປະສົງຂອງ ເຈົ້າເຊັ່ນ: ການເຮັດວຽກຢູ່ໃນຮ້ານຂາຍບໍລິການ ຫຼື ເຮັດວຽກ ຢູ່ໂຮງງານກໍ່ໃຫ້ພະຍາຍາມຈຳຊື່ສະຖານທີ່ບ່ອນທີ່ເຈົ້າຢູ່ນັ້ນ. ຖ້າເຈົ້າຄິດວ່າມັນມີຄວາມປອດໄພກໍ່ໃຫ້ເຈົ້າໄປໂອ້ລົມກັບຄົນ ທີ່ຢູ່ໃກ້ຄຽງ ແລະ ຖາມເຖິງສະຖານທີ່ນັ້ນว่าบ่อนที่เจ้าอยู่แม่น ສະຖານທີ່ໃດ.

- ຈົ່ງຈົດຈຳຮູບຮ່າງໜ້າຕາຂອງຜູ້ຄ້າມະນຸດຄົນນັ້ນ.
- ຖ້າເຈົ້າມີໂອກາດໃຫ້ເຈົ້າໂທລະສັບເພື່ອຂໍຄວາມຊ່ວຍ ເຫຼືອ, ພ້ອມທັງສາມາດອະທິບາຍว่าสะถานที่บ่อนเจ้าอยู่ ນັ້ນແມ່ນສະຖານທີ່ໃດ ແລະ ຢູ່ໃສ.

- ຖ້າເຈົ້າຄິດວ່າເຈົ້າຖືກຄ້າມະນຸດແລ້ວກໍ່ຄວນໃຫ້ວາງ ແຜນຢ່າງລະອຽດກ່ອນທີ່ຈະທຳສິ່ງໃດສິ່ງໜຶ່ງ ແລະ ບໍ່ສະ ແດງອາການໃຫ້ຜູ້ຄ້າມະນຸດຮູ້ว่าเจ้านั้น ได้ถืกขาย, ทำ ທ່າເຮັດວຽກຄືບໍ່ຮູ້ຈັກຫຍັງ ແລະ ສັງເກດຫາທາງເພື່ອລັກໜີ.
- ຖ້າເຈົ້າຖືກຂາຍເຂົ້າສະຖານທີ່ບໍລິການທາງເພດແມ່ນ ໃຫ້ພະຍາຍາມຊັກຊວນໃຫ້ຜູ້ມາໃຊ້ບໍລິການຜູ້ນັ້ນໃສ່ຖົງ ຍາງອານາໄມ.
- ຈົ່ງໂທຫາເບີໂທຕິດຕໍ່ສຸກເສີນທີ່ຢູ່ໃນປຶ້ມຄູ່ມືສະບັບນີ້.
- ຖ້າເຈົ້າຖືກຄ້າມະນຸດໂດຍບໍ່ໄດ້ຮັບເງິນເດືອນຫຍັງ ແລະ ນາຍຈ້າງຊຳພັດມາບອກກັບເຈົ້າว่าเจ้าจะต้องได้เรัด ວຽກຢູ່ທີ່ນີ້ໃນໄລຍະ 1 ຫຼື 2 ປີຈຶ່ງຈະໄດ້ເງິນເປັນກ້ອນ ໃນ ຕອນທ້າຍ, ຈົ່ງຢ່າໄດ້ເຊື່ອຄຳເວົ້າດັ່ງກ່າວນີ້ເປັນເດັດຂາດ ເພາະວາບັນດາຜູ້ຄ້າມະນຸດທັງຫຼາຍພວກເຂົາກໍ່ໄດ້ມີວິທີ ການດຽວກັນໃນການຫລອກລວງແຮງງານເຄື່ອນຍ້າຍມາ ກ່ອນ ແລະ ບັນດາແຮງງານເຄື່ອນຍ້າຍທັງຫຼາຍກໍ່ບໍ່ໄດ້ຮັບ ເງິນໃນເຫດການທີ່ຜ່ານມາ.

ຂໍຈົ່ງໂຊກດີ

ຮຽບຮຽງເປັນພາສາລາວໂດຍ:
ທ່ານ ສຸດທະສາ ບຸດສະດີ
ຜູ້ປະສານງານ ໂຄງການສະກັດກັ້ນການຄ້າມະນຸດ
ທີ່ແຂວງສະຫວັນນະເຂດ ໄລຍະ III